ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ສຳເລັດການຍົກລະດັບຂ່າວສານສູ່ຄຸນນະພາບໃໝ່



ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ສຳເລັດການສຳມະນາວຽກງານຂ່າວສານໃນວັນທີ 31 ພຶດສະພາ 2019 ແລະ ດຳເນີນມາເປັນເວລາ 4 ວັນ ທີ່ ສະຖາບັນການທະນາຄານ, ນະຄອນຫຼວງວຽງຈັນ. ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ເຜັດສະຖາພອນ ແກ້ວວົງວິຈິດ ຫົວໜ້າຫ້ອງການ ທຫລ, ທ່ານ ສາຍສະໝອນ ກົບເກສອນ ຮອງຫົວໜ້າຫ້ອງການ ທຫລ ທັງເປັນຜູ້ຊີ້ນຳໜ່ວຍງານຂ່າວສານ ທະນາຄານແຫ່ງ ສປປ ລາວ, ຊຶ່ງມີວິທະຍາກອນຈາກຄະນະໂຄສະນາອົບຮົມສູນກາງພັກ, ຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ພ້ອມນີ້ຍັງມີສຳມະກອນທີ່ມາຈາກບັນດາກົມ - ທຽບເທົ່າກົມ ແລະ 5 ສາຂາ ທຫລ ເຂົ້າຮ່ວມ.

ການສຳມະນາໃນຄັ້ງນີ້; ໄດ້ນຳສະເໜີຄວາມຮູ້ພື້ນຖານກ່ຽວກັບການຂຽນຂ່າວ ແລະ ບົດທີ່ຮັບໃຊ້ວຽກງານໂຄສະນາຜ່ານສື່ມວນຊົນໂດຍສະເພາະການຂຽນໜັງສື, ຂຽນຂ່າວ ຫຼື ຂຽນບົດຕ່າງໆທີ່ເປັນວຽກທີ່ຕ້ອງອາໃສຄວາມຮູ້, ຄວາມຄິດ ແລະ ຄວາມຮັກໃນການຂຽນຊຶ່ງມັນບໍ່ແມ່ນເລື່ອງງ່າຍທີ່ທຸກຄົນຈະເຮັດໄດ້; ກ່ອນຈະຂຽນຜູ້ຂຽນຈະຕ້ອງຮູ້ລຳດັບຄວາມຄິດຂອງຕົນໃຫ້ຜູ້ອື່ນຮັບຮູ້ເລື່ອງລາວ ແລະ ເຂົ້າໃຈໃນສິ່ງທີ່ຕົນຄິດ, ສາມາດໃຊ້ພາສາທີ່ງົດງາມ ແລະ ຖືກຕ້ອງຕາມຫຼັກໄວຍະກອນ ແລະ ຕ້ອງໃສ່ໃຈສະເໜີວ່າ: “…ກ່ອນຈະຂຽນເຮົາເປັນນາຍໂຕໜັງສືແຕ່ເມື່ອຂຽນແລ້ວໜັງສືເປັນນາຍເຮົາ…”; ພ້ອມນັ້ນ, ຍັງນຳສະເໜີເຖິງຂັ້ນຕອນ, ວິທີໃນການຂຽນຂ່າວໂດຍສະເພາະບັນດາຫຼັກການພື້ນຖານຂອງຂ່າວລວມມີລັກສະນະພັກ, ລັກສະນະຄວາມຈິງ, ລັກສະນະມະຫາຊົນ, ລັກສະນະວ່ອງໄວທັນການ ແລະ ລັກສະນະສັ້ນກະທັດຮັດ ແລະ ຈະແຈ້ງ, ນັກຂ່າວຕ້ອງມີຈັນຍາບັນ - ຈັນຍາທຳຂອງສື່ມວນຊົນ.

ນອກນີ້; ຍັງໄດ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບສື່ອອນລາຍໃນຍຸກປັດຈຸບັນຊຶ່ງມີທາງດ້ານຕັ້ງໜ້າ ແລະ ຫຍໍ້ທໍ້ໂດຍສະເພາະແມ່ນການຕອບໂຕ້ຂ່າວທີ່ບິດເບືອນ ແລະ ຂ່າວທີ່ບໍ່ມີມູນຄວາມຈິງຊຶ່ງໃນຜ່ານມາຍັງມີຄົນບໍ່ດີຈຳນວນໜຶ່ງໄດ້ນຳໃຊ້ສື່ອອນລາຍໄປໃນທາງທີ່ບໍ່ຖືກຕ້ອງ, ມີການໂຄ່ນລົ້ມໂຈມຕີ, ໃສ່ຮ້າຍປ້າຍສີຄົນອື່ນ ແລະ ອົງການຕ່າງໆ; ດັ່ງນັ້ນ, ມັນຈຶ່ງມີຄວາມຈຳເປັນທີ່ຕ້ອງໄດ້ຮຽນຮູ້ກຳແໜ້ນ ແລະ ພ້ອມທັງຊອກຫາວິທີຕອບຕ້ານຢ່າງທັນການ; ໃນຂະນະດຽວກັນນັ້ນ, ບັນດາສຳມະນາກອນຍັງໄດ້ຮຽນການປະຕິບັດໜ້າທີ່ເປັນໂຄສົກໃນລາຍການວິທະຍຸ; ຮັບຮູ້ພາລະບົດບາດ ແລະ ໜ້າທີ່ຂອງວິທະຍຸ ແລະ ວຽກອື່ນໆທີ່ຕິດພັນກັບການເປັນນັກຂ່າວ ແລະ ຜູ້ດຳເນີນລາຍການວິທະຍຸແນໃສ່ເພື່ອເພີ່ມທັກສະໃນວຽກງານຂອງສື່ມວນຊົນ.





ໃນໂອກາດດັ່ງກ່າວ; ທ່ານຮອງຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ ໄດ້ຕາງໜ້າໃຫ້ຄະນະນຳທະນາຄານແຫ່ງ ສປປ ລາວ ໄດ້ມອບໃບຢັ້ງຢືນໃຫ້ບັນດາສຳມະນາກອນທີ່ເຂົ້າຮ່ວມພ້ອມທັງຮຽກຮ້ອງໃຫ້ທຸກຄົນຈົ່ງເອົາໃຈໃສ່ເປັນເຈົ້າການຕິດຕາມ ແລະ ຂຽນບົດ-ຂ່າວກ່ຽວກັບວຽກງານ ແລະ ການເຄື່ອນໄຫວຂອງກົມກອງຕົນກາຍເປັນເຄື່ອງມືອັນແຫຼມຄົມແກ່ຄະນະພັກ-ຄະນະຜູ້ວ່າການທະນາຄານແຫ່ງສປປລາວແລະໃຫ້ອີງການສື່ມວນຊົນໂດຍສະເພາະບັນດາໜັງສືພິມ, ວິທະຍຸ, ໂທລະພາບຂອງສູນກາງ ແລະ ທ້ອງຖິ່ນແນໃສ່ເຮັດໃຫ້ສັງຄົມ ແລະ ປະຊາຊົນຮັບຮູ້ເຂົ້າໃຈ ແລະ ຕີຖອຍບັນດາຂ່າວຂອງພວກຄົນທີ່ບໍ່ຫວັງດີທີ່ໂຄສະນາໃສ່ຮ້າຍປ້າຍສີ, ບິດເບືອນ, ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານກໍ່ຄືຂະແໜງການທະນາຄານໃຫ້ໄດ້ຢ່າງທັນການ.




**# ຂ່າວ: ຣັດສະໝີ ດວງສັດຈະ**

# ຢູ່ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ